Weekly news update from 1-5 January 2018 about land and natural resource issues in Laos.
**Summarized by** LIWG Communication Officer.

…….

ສະຫຼຸບຂ່າວປະຈຳອາທິດລະຫວ່າງວັນທີ 1-5 ມັງກອນ 2018 ກ່ຽວກັບປະເດັນທີ່ດິນ ແລະ ຊັບພະຍາກອນທາມະຊາດ ໃນປະເທດລາວ.
**ສັງລວມໂດຍ** ພະນັກງານສື່ສານ ກອງເລຂາ LIWG.

## English news

**Hundreds to be compensated for losses when Vientiane expressway built:Vientiane Times**

Many billions of kip will be awarded in compensation to families and businesses who must give up their land and other property to make way for the planned 15-km expressway linking the city centre to Xaythany district.

Under the Prime Minister’s Decree No. 84, the compensation awarded must ensure that people are provided with better or similar living conditions compared to their circumstances prior to relocation.

Construction of the expressway, which is estimated to cost between US$150 million and US$200 million, is expected to be complete before February 2021.

**Compensation Plans For Lao Rail Project Finalized, Under Review: RFA**

Financial compensation plans for Lao residents displaced by a high-speed railway linking the country with China have been finalized and are being reviewed by provincial authorities, with two provinces already approving their terms, Lao sources say.

Under Lao Decree 84 issued in April 2016, Lao citizens losing land to development projects must be compensated for lost income, property, crops, and plants. And project owners must guarantee that living conditions for those displaced will be as good as, or better than, they were before the project began.

More than 4,400 families, some of whom have already been moved from their land, are now waiting for compensation originally promised to them by November, sources said.

“It’s already the end of the year, and it’s still quiet,” one Luang Prabang resident still living on his land told RFA at the end of December.

*Read more about the update of China-Laos Railway project **here**, and see video of the process of China-Laos Railway Project **here**.*

**Champassak People’s Council debates development issues: Vientiane Times**

Champassak province People’s Council has called on all sectors to be united in resolving and finalising issues raised for debate.

Environmental and land management still lacks systematic agreement, according to Mr Meksavanh, who said most council members voiced the same opinion that some authorised concession projects had not been carried out in line with their stated objectives, while some authorisations had not followed procedures and had violated the law.

**China meets annual railway investment targets: Xinhua news**

China met its annual targets on increasing railway investment in 2017 as the authorities continued to promote railway construction.

China spent 801 billion yuan (about 123 billion U.S. dollars) on railway projects and put 3,038 km of new tracks into operation in 2017, meeting its annual targets of 800 billion yuan of investment and 2,100 km of new lines, according to the China Railway Corporation.

The growth of railway construction projects came at a time when the country is enduring continuous deceleration in the growth of fixed-asset investment.

In the coming three years, transport will play a bigger role in eradicating poverty and achieving greener, safer development, according to Li.

*Read more the about the influence of Chinese Investment/aids in Laos **here**, and about the China, Laos sign agreement on Lancang-Mekong cooperation fund **here**.*

**Govt mulls fairer compensation policy for people affected by development projects: Vientiane Times**
Property owners will receive fairer and more prompt compensation when they lose their land or buildings to make way for a development scheme, once a newly-drafted law is passed and promulgated, a policy developer has said.
People who suffer losses will not only be fully compensated but also offered permanent income-earning jobs in the area they relocate to.
The new law is seen as being more comprehensive as it also attaches great importance to providing permanent jobs to those affected, along with defining a timeframe for the payment of compensation.

## ຂ່າວພາສາລາວ

100 ກວ່າຄອບຄົວຖືກໂຄງການ ເຂດເສດຖະກິດພິເສດມະຫານະທີສີພັນດອນ: **ຂ່າວໂດຍ Lao post**
ໂຄງການພັດທະນາເຂດເສດຖະກິດ ພິເສດມະຫານະທີສີພັນດອນ ມີເນື້ອທີ່ທັງໝົດ 9.800 ເຮັກຕາ ມີມູນຄ່າການລົງທຶນ ຫຼາຍກວ່າ 9 ຕື້ໂດລາ ໄລຍະເວລາຄືນທຶນ 33 ປີ ຂະນະທີ່ມີຜູ້ໄດ້ຮັບຜົນກະທົບຈາກໂຄງການທັງໝົດ 100 ກວ່າຄອບຄົວ.
ໂຄງການພັດທະນາເຂດເສດຖະກິດ ພິເສດມະຫານະທີສີພັນດອນ ພາຍຫຼັງທີ່ໄດ້ເຊັນສັນຍາ MOU ກັບລັດຖະບານທາງໂຄງການແມ່ນໄດ້ດຳເນີນການສຳ ຫຼວດອອກແບບ ແລະສຶກສາຄວາມເປັນໄປໄດ້ ຊຶ່ງໃຊ້ເວລາສຳຫຼວດ 6 ເດືອນ ປະຈຸບັນແມ່ນໄດ້ສຳເລັດການສຳຫຼວດ 100% ພ້ອມທັງຈະເລີ່ມລົງມືກໍ່ສ້າງແຕ່ປີ 2018 ແລະຈະໃຫ້ສຳເລັດທຸກຮູບແບບ ໃນປີ 2050.
*ທ່ານສາມາດເບິ່ງວີດີໂອ ແຜນແມ່ບົດເຂດເສດຖະກິດພິເສດມະຫານະທີສີພັນດອນໄດ້ ທີ່ນີ້.*

ປີ 2017 ລັດຖະບານສັ່ງຍຸບໂຮງງານປຸງແຕ່ງໄມ້ 140 ແຫ່ງ: **ຂ່າວໂດຍວຽງຈັນໃໝ່**
ໃນປີ 2017 ຜ່ານມາ ລັດຖະບານໄດ້ເອົາໃຈໃສ່ສົ່ງເສີມການຜະລິດສິນຄ້າ ແລະ ການບໍລິການໃຫ້ມີຄວາມຫຼາກຫຼາຍ ເພື່ອຫຼຸດຜ່ອນການເອື່ອຍອີງໃສ່ຊັບພະຍາກອນທຳມະຊາດ ໃນຂະນະດຽວກັນ ກໍ່ໄດ້ມີການປັບປຸງ ແລະ ດັດສົມໂຮງງານປຸງແຕ່ງໄມ້ທົ່ວປະເທດ ທີ່ດຳເນີນກິດຈະການກ່ອນຄຳສັ່ງເລກທີ 15/ນຍ ເຊິ່ງມີ 1.595 ແຫ່ງ ໃນນັ້ນ ມີໂຮງງານທີ່ບໍ່ໄດ້ມາດຕະຖານ ແລະ ເຄື່ອນໄຫວຜິດກົດໝາຍຖືກສັ່ງຍຸບຈຳນວນ 140 ແຫ່ງ ຄື: ຢູ່ແຂວງໄຊຍະບູລີ ຍົກເລີກ 83 ແຫ່ງ ນະຄອນຫຼວງ 8 ແຫ່ງ ບໍລິຄຳໄຊ 13 ແຫ່ງ ສະຫວັນນະເຂດ 13 ແຫ່ງ ສາລະວັນ 4 ແຫ່ງ ແລະ ແຂວງເຊກອງ 19 ແຫ່ງ ອີງຕາມແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ 2017.

ເລີ່ມພັດທະນາໂຄງການເຂື່ອນໄຟຟ້ານ້ຳຕົກ ເຊລະນອງ 1: **ຂ່າວໂດຍ ວຽງຈັນໃໝ່**
ໂຄງການເຂື່ອນໄຟຟ້ານ້ຳຕົກເຊລະນອງ 1 ມີທີ່ຕັ້ງຢູ່ເມືອງນອງ ແລະ ເມືອງພິນ ແຂວງສະຫວັນນະເຂດ ມີກຳລັງແຮງຕິດຕັ້ງ 70 ເມກາວັດ ພະລັງງານຜະລິດໄດ້ 268 GWh ມູນຄ່າໂຄງການ 150 ລ້ານໂດລາສະຫະລັດ ຫຼື ປະມານ 1.200 ຕື້ກີບ ພະລັງງານໄຟຟ້າຂາຍໃຫ້ພາຍໃນປະເທດ (ລັດວິສາຫະກິດໄຟຟ້າລາວ) ມີອາຍຸສຳປະທານ 25 ປີ ນັບແຕ່ມື້ເປີດການຜະລິດໄຟຟ້າ ແລະ ມີໄລຍະການກໍ່ສ້າງ 4 ປີ ນັບແຕ່ນີ້ຫາປີ 2022.
ສຳລັບຜູ້ລົງທຶນແມ່ນບໍລິສັດ ເຂື່ອນໄຟຟ້າເຊລະນອງ 1 ຈາກັດ ເຊິ່ງປະກອບມີ 4 ຂາຮຸ້ນ ຄື: ລັດຖະບານລາວ ຕາງໜ້າໂດຍລັດວິສາຫະກິດໄຟຟ້າລາວ ຖືຮຸ້ນ 10% (ຮຸ້ນລ້າ) ບໍລິສັດ ດາວສະຫວັນ ຈຳກັດ (ເອກະຊົນລາວ) ຖືຮຸ້ນ 15% ບໍລິສັດ YEIG International Energy Development (ສປ ຈີນ) ຖືຮຸ້ນ 70% ແລະ ບໍລິສັດ Sunpaper Holding Lao (ສປ ຈີນ) ຖືຮຸ້ນ 5%.
*ອ່ານຂ່າວທີ່ກ່ຽວຂ້ອງ ກ່ຽວກັບການລົງທຶນຂອງ ສປປ ຈີນໃນ ສປປ ລາວ "ລາວ-ຈີນ ລົງນາມສັນຍາຮ່ວມມືຫຼາຍສະບັບໃນໂຄງການກອງທຶນພິເສດແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ" ທີ່ນີ້.*

ນາຍົກເນັ້ນຈົ່ງນຳໃຊ້ທຶນເພື່ອການພັດທະນາໃຫ້ມີປະສິດທິຜົນສູງຂຶ້ນກວ່າເກົ່າ: **ຂ່າວໂດຍ ເສດຖະກິດ-ສັງຄົມ**

ໃນການປະຕິບັດແຜນປີ 2018 ທ່ານ ທອງລຸນ ສີສຸລິດ ເນັ້ນວ່າພວກເຮົາຕ້ອງໄດ້ເອົາໃຈໃສ່ການລະດົມ ແລະ ນໍາໃຊ້ທຶນເພື່ອການພັດທະນາເສດຖະກິດ-ສັງຄົມໃຫ້ມີປະສິດທິຜົນສູງກວ່າເກົ່າ.
ຂະນະທີ່ບັນດາໂຄງການຂະໜາດໃຫຍ່ທີ່ໄດ້ເລີ່ມດໍາເນີນການຈັດຕັ້ງປະຕິບັດແລ້ວ ທ່ານ ນາຍົກຍໍ້າວ່າ ຊຸກຍູ້ໃຫ້ສາມາດດໍາເນີນໄປຕາມແຜນ ເຊັ່ນ: ໂຄງການກໍ່ສ້າງເສັ້ນທາງລົດໄຟ ລາວ-ຈີນ, ໂຄງການພັດທະນາຕາມນະໂຍບາຍ 1 ແລວທາງ 1 ເສັ້ນທາງ, ໂຄງການພັດທະນາເສດຖະກິດພິເສດທີ່ກໍາລັງດໍາເນີນ, ໂຄງການທີ່ກໍາລັງສຶກສາຄວາມເປັນໄປໄດ້ ແລະ ໂຄງການລົງທຶນຂະໜາດໃຫຍ່ອື່ນໆທີ່ມີຜົນກະທົບສູງຕໍ່ການພັດທະນາອື່ນໆໃຫ້ສາມາດດໍາເນີນໄປໄດ້ດີ.

**ການລັກລອບຕັດໄມ້ຍັງມີຢູ່: ຂ່າວໂດຍໜັງສືພິມ ລາວພັດທະນາ**

ກະຊວງກະສິກໍາ ແລະ ປ່າໄມ້ ໃຫ້ຮູ້ວ່າ: ໃນອາທິດທີ່ຜ່ານມານີ້ ເຈົ້າໜ້າທີ່ກວດກາປ່າໄມ້ສາມາດກວດ ແລະ ຢຶດໄມ້ ຂອງຜູ້ກະທໍາຜິດໄດ້ 551 ໂຕນ ລວມມີບໍລິມາດຫຼາຍກວ່າ 23 ແມັດກ້ອນ ສ່ວນໃຫຍ່ແມ່ນປະເພດໄມ້ຫວງຫ້າມ, ພ້ອມນັ້ນກໍ່ໄດ້ກວດກາ ແລະ ຢຶດສັດນໍ້າ - ສັດປ່າປະເພດຫວງຫ້າມຈາກຜູ້ກະທໍາຜິດໄດ້ 213 ໂຕ.
*ອ່ານຂ່າວເພີ່ມເຕີມກ່ຽວກັບຂ່າວທີ່ກ່ຽວຂ້ອງ "ຍັງພົບມີການບຸກລຸກເຂດປ່າສະຫງວນຫຼາຍແຫ່ງ" ທີ່ນີ້.*

**ບໍ່ຄໍາເຊໂປນ ຢຸດຜະລິດຄໍາ ໜຶ່ງສາເຫດລາຍຮັບສະຫວັນນະເຂດບໍ່ເຖິງແຜນ: ຂ່າວໂດຍເສດຖະກິດ-ສັງຄົມ**

ການທີ່ແຂວງສະຫວັນນະເຂດເກັບລາຍຮັບບໍ່ໄດ້ຕາມແຜນການກໍ່ສືບເນື່ອງມາຈາກຫຼາຍສາເຫດ ອັນສໍາຄັນແມ່ນລາຍຮັບຈາກຫົວໜ່ວຍທຸລະກິດການຜະລິດ ໂດຍສະເພາະແມ່ນບໍລິສັດລ້ານຊ້າງມິເນໄຣສ ມີແຕ່ຜະລິດທອງ ແລະ ການຜະລິດຄໍາແມ່ນຢຸດຕິໄປຫຼາຍປີແລ້ວ ສ່ວນການຂຸດຄົ້ນແຮ່ທາດອື່ນໆ ກໍ່ຫຼຸດຕາມໆກັນໄປ.